# ບົດອອກຂ່າວ
# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19 ປະຈໍາວັນທີ 18 ເມສາ ປີ 2020

ໂດຍ: **ທ່ານ ຮສ ດຣ. ພູທອນ ເມືອງປາກ**, ຮອງລັດຖະມົນຕີ ກະຊວງສາທາລະນະສຸກ, ຜູ້ປະຈໍາການ ຄະນະສະເພາະກິດ

**ທ່ານ ພົນຈັດຕະວາ ດຣ. ບົວສີງ ອິນທະວົງ** ຫົວໜ້າກົມເສນາຮັກ, ຄະນະສະເພາະກິດ ຕ້ານພະຍາດລະບາດ ກະຊວງປ້ອງກັນປະເທດ,

**ທ່ານ ພັນເອກ ດຣ. ສຸລິພົນ ເພັດຈັນທະລາ** ຫົວໜ້າການທະຫານໂຮງໝໍສູນກາງ 103 ກອງທັບປະຊາຊົນລາວ

## I. ສະພາບການເຝົ້າລະວັງ COVID-19 ຢູ່ ສປປ ລາວ ຮອດ 5 ໂມງແລງ ຂອງວັນທີ 17 ເມສາ 2020

### 1. ວຽກງານຈຸດຜ່ານດ່ານ

ຈໍານວນຜູ້ເດີນທາງເຂົ້າມາ ມີທັງໝົດ **1,002** ຄົນ

- ຜູ້ເດີນທາງ ຜ່ານດ່ານລາວ-ໄທ ທັງໝົດ **310** ຄົນ, ໃນນັ້ນ ມີແຮງງານລາວທີ່ກັບມາແຕ່ໄທ 06 ຄົນຜ່ານດ່ານຊ່ອງເມັກ, ເຫຼືອນັ້ນແມ່ນ ພະນັກງານຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານດ່ານລາວ-ຈີນ ທັງໝົດ **250** ຄົນ, ທັງໝົດ ແມ່ນພະນັກງານຂັບລົດບັນທຸກຂົນສິ່ງສິນຄ້າ
- ຜູ້ເດີນທາງ ຜ່ານດ່ານລາວ-ຫວຽດ ທັງໝົດ **442** ຄົນ, ທັງໝົດແມ່ນພະນັກງານຂັບລົດບັນທຸກຂົນສິ່ງສິນຄ້າ
- ຜູ້ເດີນທາງ ຜ່ານສະໜາມບິນ 00 ຄົນ
- ໃນທຸກດ່ານ ແມ່ນໄດ້ກວດວັດ ອຸນຫະພູມຮ່າງກາຍ ແລະ ບໍ່ມີຄົນເປັນໄຂ້, ສໍາລັບແຮງງານລາວທີ່ເຂົ້າມາໃໝ່ແມ່ນໄດ້ສົ່ງໄປຕິດຕາມຢູ່ສູນຈໍາກັດບໍລິເວນທີ່ໄດ້ກໍານົດໄວ້ໃຫ້ຄົບ 14 ວັນ.

### 2. ການເຝົ້າລະວັງ ແລະ ວິເຄາະ

- ໃນວັນທີ 17 ເມສາ 2020, ໄດ້ເກັບຕົວຢ່າງມາກວດທັງໝົດ **27** ຄົນ, ໃນນີ້ ມີ ນະຄອນຫຼວງວຽງຈັນ 23 ຄົນ, ຫຼວງພະບາງ 01 ຄົນ, ສະຫວັນນະເຂດ 03 ຄົນ (ທັງ03 ຄົນແມ່ນແຮງງານລາວທີ່ກັບມາແຕ່ໄທ). ຜົນກວດທັງໝົດ 27 ກໍລະນີ **ບໍ່ພົບເຊື້ອ.** ໝາຍວ່າໃນວັນທີ 17 ເມສາ 2020 **ບໍ່ມີກໍລະນີໃໝ່.**
- ນັບແຕ່ເດືອນມັງກອນ ຮອດ ວັນທີ 17 ເມສາ 2020 ໄດ້ເກັບຕົວຢ່າງມາກວດທັງ ໝົດ ມີ **1,318** ຄົນ, ກວດພົບເຊື້ອທັງໝົດ **19** ຄົນ (**06 ມື້ແລ້ວທີ່ບໍ່ມີຜູ້ຕິດເຊື້ອເພີ່ມ**)

- ຈໍານວນຜູ້ສໍາຜັດໃກ້ຊິດທັງໝົດ ທີ່ໄດ້ຕິດຕາມ ແຕ່ວັນທີ 09 ມີນາ - 17 ເມສາ 2020 ມີ ທັງໝົດ **313** ຄົນ, ໝົດກໍານົດຕິດຕາມ ທັງໝົດ **263** ຄົນ, ຍັງສືບຕໍ່ຕິດຕາມທັງໝົດ **50** ຄົນ, ໃນນີ້ ຢູ່ນະຄອນຫຼວງ

ວຽງຈັນ 24 ຄົນ (ໃນນັ້ນ 13 ຄົນ ແມ່ນຕິດຕາມຢູ່ໂຮງໝໍ 103, ຕິດຕາມຢູ່ເຮືອນ 10 ຄົນ ແລະ ອີກ 01 ຄົນ ແມ່ນຕິດຕາມຢູ່ເຮືອນສວນ (ໂດຍສະເລ່ຍຍັງອີກ 7ມື້ ຈຶ່ງຄົບກຳນົດຕິດຕາມ 14 ວັນ).

- ແຂວງ ໄຊສົມບູນ 26 ຄົນ ທັງໝົດຕິດຕາມຢູ່ ແຄ້ມພູຄຳ (ຍັງອີກ 1 ມື້ຈະໝົດກຳນົດ).

**3. ສຳລັບ ການຕິດຕາມ ສະຖານທີ່ຈຳກັດບໍລິເວນ ແລະ ຜູ້ຈຳກັດບໍລິເວນ ຢູ່ເຮືອນ ໃນທົ່ວປະເທດ**

- ເລີ່ມແຕ່ວັນທີ 20 ມີນາ 2020 ມີແຮງງານລາວຈຳນວນຫຼວງຫຼາຍ ຈາກປະເທດໄທໄດ້ກັບເຂົ້າມາລາວ ຕາມຈຸດຜ່ານແດນຕ່າງໆ ມີທັງໝົດ 113,404 ຄົນ , ອຳນາດການປົກຄອງ ໄດ້ມີການຈັດກຽມສະຖານທີຈຳກັດບໍລິເວນໃນແຕ່ລະເມືອງ, ກຸ່ມບ້ານທົ່ວປະເທດມີ 2,142 ສູນ ເຊິ່ງຮອງຮັບແຮງງານທັງໝົດ 68,534 ຄົນ ແລະ ໄດ້ຈຳກັດບໍລິເວນຕົນເອງຢູ່ເຮືອນ 44,870 ຄົນ.
- ມາຮອດວັນທີ 17 ເມສາ 2020 ທົ່ວປະເທດ ຍັງມີ **1,399** ສູນ, ມີຜູ້ຈຳກັດບໍລິເວນຢູ່ສູນ **17,775** ຄົນ, ຈຳກັດບໍລິເວນຢູ່ເຮືອນ **9,031** ຄົນ, ເກັບຕົວຢ່າງມາກວດວິເຄາະຫາເຊື້ອ ມີທັງໝົດ 122 ຄົນ. ທັງໝົດບໍ່ພົບເຊື້ອ.

**4. ການຕິດຕາມປິ່ນປົວຄົນເຈັບຢູ່ໂຮງໝໍ**

- ປະຈຸບັນຍັງມີຜູ້ຕິດເຊື້ອນອນຢູ່ໂຮງໝໍ 17 ຄົນ
- ຈຳນວນ 03 ຄົນຢູ່ໂຮງໝໍແຂວງຫຼວງພະບາງ ເຫັນວ່າມີອາການຄົງຕົວ ຂັ້ນເບົາບາງ ຍັງຕິດຕາມການກວດຫາເຊື້ອເພື່ອຢັ້ງຢືນ.
- ຈຳນວນ 14 ຄົນຢູ່ໂຮງໝໍມິດຕະພາບ ທັງໝົດເຫັນວ່າ ມີອາການເບົາບາງ ແລະ ຍັງຕິດຕາມການກວດຫາເຊື້ອເພື່ອຢັ້ງຢືນ.

**5. ຂໍ້ແນະນຳ**

ບັນດາທ່ານທີ່ນັບຖື ແລະ ຮັກແພງ,

- ຄະນະສະເພາະກິດພວກເຮົາໄດ້ຈັດຕັ້ງໃຫ້ມີພະນັກງານ ຮັບສາຍດ່ວນເຂົ້າມາ 165 ແລະ 166 ທັງໝົດ 31 ປ່ອງ, ໃນວັນທີ 17 ເມສາ ທັງໝົດ 4,085 ສາຍ, ໃນນີ້ ມີສາຍທີ່ສອບຖາມກ່ຽວກັບພະຍາດ COVID-19 ພຽງແຕ່ 632 ສາຍ ກວມເອົາ 15.4 % ເຫຼືອນັ້ນແມ່ນ ສາຍທີ່ໂທມາລົບກວນ. ຈຶ່ງຮຽກຮ້ອງໃຫ້ຜູ້ທີ່ນຳສາຍດ່ວນ ຈົ່ງພິຈາລະນາ ບໍ່ໃຫ້ເປັນການລົບກວນ ຜູ້ທີ່ສົນໃຈ ໃນການປ້ອງກັນ ການແຜ່ລະບາດຂອງພະຍາດ COVID-19.
- ເຖິງວ່າ ສະພາບການຕິດເຊື້ອຢູ່ປະເທດຂອງເຮົາ ໄດ້ເວັ້ນໄລຍະຫ່າງມາໄດ້ 6 ວັນແລ້ວ ຜູ້ຕິດເຊື້ອປິ່ນປົວຢູ່ໂຮງໝໍ ກໍ່ໄດ້ອອກໂຮງໝໍ2 ຄົນແລ້ວ ແຕ່ພວກເຮົາ ຈະບໍ່ໄດ້ລົດລະການເຝົ້າລະວັງຕິດຕາມຄົ້ນຫາ ຜູ້ສົງໄສທີ່ຈະຕິດເຊື້ອ ໂດຍສະເພາະຜູ້ທີ່ຍັງຈຳກັດບໍລິເວນຕົນເອງຢູ່ສູນ ແລະ ຢູ່ເຮືອນ ລວມທັງຜູ້ເດີນທາງຜ່ານຊາຍແດນເຂົ້າມາໃໝ່ ເພື່ອມາກວດວິເຄາະ ຢັ້ງຢືນພະຍາດໃຫ້ໄດ້ໄວ ແລະ ປິ່ນປົວຢ່າງທັນການ.

- ພວກເຮົາໄດ້ສຶກສາຮ່ວມກັບອົງການອະນາໄມໂລກເຫັນວ່າ ຂະບວນການລະບາດຂອງປະເທດໃກ້ຄຽງ ຫຼັງຈາກມີການຕິດເຊື້ອຄັ້ງທຳອິດຮອດ ມື້ທີ່ 40 ຈະແມ່ນມື້ທີ່ມີການລະບາດສູງສຸດ, ສະເພາະລາວເຮົາ ມາຮອດມື້ນີ້ກໍ່ເປັນມື້ທີ່ 26 ເຊິ່ງຈະຕ້ອງໄດ້ສືບຕໍ່ເຝົ້າລະວັງຢ່າງເຂັ້ມງວດ, ອີກບັນຫາໜຶ່ງປະຈຸບັນນີ້ ປະເທດທີ່ມີການລະບາດຜ່ອນຄາຍລົງແລ້ວນັ້ນ ກໍ່ຍັງກັບມີຜູ້ຕິດເຊື້ອຄືນໃໝ່ເຊິ່ງມີການວິເຄາະວ່າເຊື້ອອາດຈະຍັງຢູ່ນຳຄົນເຈັບທີ່ບໍ່ມີອາການສະແດງອອກ ໃນ 49 ວັນ

ສະນັ້ນ, ຈິ່ງຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງສືບຕໍ່ຮ່ວມໄມ້ຮ່ວມມືເປັນເຈົ້າການຮ່ວມກັນປະຕິບັດຄຳສັ່ງ ເລກທີ 06/ນຍ ແລະ ບັນດາຂໍ້ແນະນຳຕ່າງໆຢ່າງເຂັ້ມງວດ ເພື່ອໃຫ້ສະພາບການລະບາດຂອງພະຍາດໂຄວິດຜ່ອນຄາຍລົງ ຈຶ່ງຈະສາມາດກັບມາດຳລົງຊີວິດຕາມປົກກະຕິໄດ້. ຍ້ອນວ່າສະພາບການລະບາດທົ່ວໂລກຍັງສືບຕໍ່ ມີຜູ້ຕິດເຊື້ອ ແລະ ເສຍຊີວິດເພີ່ມຂຶ້ນເປັນປະຈຳແຕ່ລະວັນ:

- **ສະພາບການລະບາດຂອງພະຍາດ COVID-19 ໃນທົ່ວໂລກ**

  ມາຮອດເວລາ 6:00 ໂມງເຊົ້າ ຂອງວັນທີ **18 ເມສາ 2020**, ທົ່ວໂລກມີການລາຍງານການລະບາດທັງໝົດ **210** (ປະເທດ/ເຂດ).

  - ມີກໍລະນີຢັ້ງຢືນ ຜູ້ຕິດເຊື້ອພະຍາດ COVID-19 **2,247,659** (ໃໝ່ **85,292**)
  - ເສຍຊີວິດ **154,086** (ໃໝ່ **8,615**)
  - ປິ່ນປົວຫາຍດີ **546,743** ຄົນ (ໃໝ່ 23,680)
  - ມີບາງປະເທດ ຈຳນວນຄົນຕິດເຊື້ອມື້ດຽວ ມີເຖິງ **31,253** ຄົນ ແລະ ເສຍຊີວິດຫຼາຍກວ່າ **2,478** ຄົນ ຕໍ່ມື້
  - ອັດຕາຄວາມຮ້າຍແຮງເພີ່ມຂຶ້ນເປັນ **6.85%** (ມື້ວານນີ້ 6.67%)

- ຂໍແກ້ຂ່າວໃນການຖະແຫຼງກ່ຽວກັບການຊ່ວຍເຫຼືອຈາກຕ່າງປະເທດ ສະເພາະປະເທດອາເມລິກາ ໄດ້ຊ່ວຍເຫຼືອ 02 ຄັ້ງ: ຄັ້ງທີ່ 1 ແມ່ນຊ່ວຍເຫຼືອອຸປະກອນການແພດມີມູນຄ່າ 9,980 ໂດລາ, ຄັ້ງທີ່ ສອງແມ່ນຊ່ວຍງົບປະມານ ມູນຄ່າ 1,9 ລ້ານໂດລາ ໃຫ້ອົງການອະນາໄມໂລກ, ຢູນິເຊັບ ແລະ ອົງການຊ່ວຍເຫຼືອເດັກສາກົນປະຈຳ ສປປ ລາວ ເຊິ່ງບໍ່ແມ່ນຈຳນວນເງິນ 100 ລ້ານໂດລາຕາມທີ່ເປັນຂ່າວລື.
- ສຸດທ້າຍນີ້ ຮຽກຮ້ອງມາຍັງບັນດາທ່ານຈົ່ງພ້ອມກັນປ້ອງກັນຕົນເອງ, ປ້ອງກັນຄອບຄົວ ແລະ ຜູ້ທີ່ຮັກແພງ ໃກ້ຊິດກັບບັນດາທ່ານຈາກການຕິດເຊື້ອພະຍາດ ໂຄວິດ 19 ຖືວ່າແມ່ນພັນທະ ແລະ ຄວາມຮັບຜິດຊອບຂອງບັນດາທ່ານ ແລະ ເປັນການປະກອບສ່ວນອັນສຳຄັນໃຫ້ແກ່ປະເທດຊາດເພື່ອຜ່ານວິກິດຂອງການລະບາດພະຍາດໂຄວິດ 19.

**ຂໍຂອບໃຈ**